# Law on Investment Promotion

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 2

## Principal of investment promotion and investment in other countries

## ຫຼັກການກ່ຽວກັບວຽກງານສົ່ງເສີມການລົງທຶນ ແລະ ການອອກໄປລົງທຶນຢູ່ຕ່າງປະເທດ

### 1. ຫຼັກການກ່ຽວກັບວຽກງານສົ່ງເສີມການລົງທຶນ

ຜູ້ລົງທຶນໃນ ສປປ ລາວ ຕ້ອງໄດ້ເອົາໃຈໃສ່ປະຕິບັດຕາມຫຼັກການຕ່າງໆ ຂອງການລົງທຶນຢ່າງລະອຽດ ທັ່ງນີ້ເນື່ອງຈາກບັນດາຫຼັກການດັ່ງກ່າວສະແດງອອກເຖິງແນວຄິດຊີ້ນຳ ແລະ ຖືກກຳນົດໄວ້ໃນຂໍ້ກຳນົດກົດໝາຍ ເພື່ອເປັນແນວທາງປະຕິບັດສຳລັບການລົງທຶນ, ບັນດາຫຼັກການດັ່ງກ່າວປະກອບດ້ວຍ:

### 1.1. ຫຼັກການທົ່ວໄປ

ຫຼັກການທົ່ວໄປ ໝາຍເຖິງຫຼັກການໜຶ່ງ ຊຶ່ງປະກອບດ້ວຍຫຼັກຄວາມສະເໝີພາບ, ຫຼັກປົກປ້ອງຜູ້ລົງທຶນຕາມ ກົດໝາຍ, ຫຼັກການແຂ່ງຂັນທາງທຸລະກິດ, ຫຼັກບໍລິການປະຕູດຽວ One Stop Service  ແລະ ຫຼັກຜົນປະ ໂຫຍດຮ່ວມກັນ.

ໃນການວາງຫຼັກການດັ່ງກ່າວນີ້ເພື່ອແນໃສ່ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ ແລະ ເປັນບ່ອນໃນການ ຈັດຕັ້ງປະຕິບັດທັງກໍ່ໃຫ້ເກີດຄວາມເປັນທຳສຳລັບຜູ້ດຳເນີນທຸລະກິດດ້ວຍກັນ.

#### 1.1.1. ຫຼັກການຄວາມສະເໝີພາບ.

ໃນລັດຖະທຳມະນູນແຫ່ງ ສປປ ລາວ ໄດ້ກຳນົດໄວ້ວ່າ ພົນລະເມືອງລາວໂດຍບໍ່ຈຳແນກຍິງ, ຊາຍ, ຖານະ ທາງດ້ານສັງຄົມ, ລະດັບການສຶກສາ, ຄວາມເຊື່ອ ແລະ ຊົນເຜົ່າ ລ້ວນແຕ່ມີຄວາມສະເໝີພາບກັນຕໍ່ໜ້າກົດໝາຍ.

ນອກຈາກນັ້ນ ໃນມາດຕາ 39(ໃໝ່)  ຍັງກຳນົດໄວ້ວ່າ ພົນລະເມືອງລາວມີສິດເຮັດວຽກ ແລະ ປະກອບອາ ຊີບບໍ່ຂັດກັບກົດໝາຍ ຊຶ່ງໃນບັນດາຂໍ້ກຳນົດກົດໝາຍເຫຼົ່ານັ້ນສະແດງໃຫ້ເຫັນວ່າ ການປະກອບອາຊີບບໍ່ວ່າຈະເປັນອາຊີບອິດສະຫຼະ ຫຼື ອາຊີບໃດໆ ກໍ່ຕາມຕ້ອງມີຄວາມສະເໝີພາບກັນໃນການປະກອບອາຊີບນັ້ນ ໝາຍວ່າທຸກພາກສ່ວນເສດຖະກິດທັງພາຍໃນ ແລະ ຕ່າງປະເທດ ລ້ວນແຕ່ມີຄວາມສະເໝີພາບກັນຕໍ່ໜ້າກົດໝາຍໃນການດຳເນີນທຸລະກິດ, ທັງ ແຂ່ງຂັນ, ທັງຮ່ວມມືກັນ ເພື່ອຂະຫຍາຍກຳລັງການຜະລິດເປີດກວ້າງການຜະລິດ, ທຸລະກິດ ແລະ ການບໍລິການໃດໜຶ່ງໂດຍທີ່ຜູ້ດຳເນີນທຸລະກິດຕ້ອງມີຄວາມສະເໝີພາບກັນໃນການດຳເນີນທຸລະກິດໂດຍບໍ່ຈຳ ແນກແຫຼ່ງທຶນ ຫຼື ຂະໜາດຂອງທຶນ ຊຶ່ງໃນບັນດາຄວາມສະເໝີພາບເຫຼົ່ານັ້ນສະແດງອອກທາງດ້ານສິດ ແລະ ຜົນປະໂຫຍດຕະຫຼອດເຖິງພັນທະຂອງຜູ້ລົງທຶນ ຊຶ່ງຕ້ອງໄດ້ເອົາໃຈໃສ່ປະຕິບັດໃຫ້ເປັນເອກະພາບກັນໃນທົ່ວປະເທດ ໂດຍບໍ່ຈຳແນກວ່າຜູ້ລົງທຶນຈະເປັນໃຜ, ມາຈາກໃສກໍ່ຕາມ.

"ທຸກພາກສ່ວນເສດຖະກິດທັງພາຍໃນ ແລະ ຕ່າງປະເທດ ລ້ວນແຕ່ມີຄວາມສະເໝີພາບຕໍ່ໜ້າກົດໝາຍ ໃນການດຳເນີນທຸລະກິດ, ທັງແຂ່ງຂັນ ແລະ ຮ່ວມມືກັນ ເພື່ອຂະຫຍາຍກຳລັງການຜະລິດ, ເປີດກວ້າງການຜະລິດ, ທຸລະກິດ ແລະ ການບໍລິການ"[1].

---

[1] ມາດຕາ 5, ກົດໝາຍວ່າດ້ວຍວິສາຫະກິດ, ສະບັບເລກທີ 46/ສພຊ,ລົງວັນທີ 26 ທັນວາ 2013.

**1.1.2. ຫຼັກການປົກປ້ອງຜູ້ລົງທຶນຕາມກົດໝາຍ.**

ຜູ້ລົງທຶນຕາມກົດໝາຍ ໝາຍເຖິງຜູ້ລົງທຶນທີ່ໄດ້ຮັບອະນຸຍາດຢ່າງເປັນລາຍລັກອັກສອນ ຈາກພາກສ່ວນລັດ ໂດຍບໍ່ຈໍາແນກບຸກຄົນ ຫຼື ນິຕິບຸກຄົນ ຫຼື ບໍ່ຈໍາແນກວ່າຜູ້ລົງທຶນພາຍໃນ ຫຼື ຜູ້ລົງທຶນຕ່າງປະເທດ ໃນກໍລະນີທີ່ ຜູ້ລົງທຶນເຫຼົ່ານີ້ຫາກຖືກລະເມີດຜູ້ລົງທຶນເຫຼົ່ານັ້ນ ກໍ່ມີສິດຮ້ອງຟ້ອງຕໍ່ວ່າ ເພື່ອທວງໃຫ້ຢຸດເຊົາຕໍ່ການກະທໍາທີ່ຜິດກົດໝາຍເຫຼົ່ານັ້ນ, ພ້ອມນັ້ນຍັງມີສິດຮຽກຮ້ອງເອົາຄ່າເສຍຫາຍ ທີ່ຕົນຄວນຈະໄດ້ຮັບ ນອກຈາກນັ້ນໃນກົດໝາຍສົ່ງເສີມການລົງທຶນຍັງກໍານົດກ່ຽວກັບການປົກປ້ອງຜູ້ລົງທຶນດັ່ງນີ້.

ຜູ້ລົງທຶນລ້ວນແຕ່ໄດ້ຮັບສິດສະເໝີພາບໃນການລົງທຶນ, ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນພາຍໃຕ້ລະບຽບກົດໝາຍຂອງ ສປປ ລາວ ແລະ ສົນທິສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

ສໍາລັບຮູບການປົກປ້ອງ ແມ່ນລັດປົກປ້ອງຢ່າງເຕັມສ່ວນຄື ລັດຈະບໍ່ເກັບເກນ, ຍຶດ ແລະ ໂອນກິດຈະການ ຂອງເອກະຊົນມາເປັນຂອງລັດດ້ວຍວິທີການໃຊ້ອໍານາດທາງບໍລິຫານແຕ່ໃນກໍລະນີທີ່ລັດຖະບານຫາກເຫັນວ່າກິດຈະການໃດທີ່ຄວາມຈໍາເປັນທີ່ຈະນໍາໃຊ້ເຂົ້າໃຈ ສາທາລະນະປະໂຫຍດ ລັດກໍ່ຈະມີການທົດແທນໃຫ້ກັບຜູ້ລົງທຶນຕາມມູນຄ່າຕົວຈິງ ຫຼື ຕາມລາຄາຕະຫຼາດໃນເວລາກ່ອນໂອນດ້ວຍວິທີການຊໍາລະໃຫ້.

ສໍາລັບການປົກປ້ອງຊັບສິນທາງປັນຍາ ຂອງຜູ້ລົງທຶນທີ່ໄດ້ຈົດທະບຽນເປັນຊັບສິນ ທາງປັນຍາຢ່າງຖືກຕ້ອງ ຕາມກົດໝາຍຊັບສິນທາງປັນຍາຂອງ ສປປ ລາວ ແລະ ສົນທິສັນຍາທີ່ລາວເປັນພາຄີແລ້ວ ລັດກໍ່ໃຫ້ການຄຸ້ມຄອງ ແລະ ປົກປ້ອງດ້ວຍ.

**1.1.3. ຫຼັກການແຂ່ງຂັນທາງທຸລະກິດ**

ໃນການດໍາເນີນທຸລະກິດປະເພດຕ່າງໆ ຜູ້ລົງທຶນຈະຕ້ອງເຂົ້າໃຈບັນຫາການແຂ່ງຂັນທາງດ້ານທຸລະກິດແມ່ນຫຍັງ? ຊຶ່ງ: "ການແຂ່ງຂັນທາງທຸລະກິດ ແມ່ນການດໍາເນີນທຸລະກິດປະເພດດຽວກັນ ລະຫວ່າງ ຜູ້ດໍາເນີນທຸລະກິດດ້ວຍກັນ ເພື່ອແຂ່ງຂັນທາງດ້ານຄຸນນະພາບ, ປະລິມານ, ລາຄາ ແລະ ປັດໃຈອື່ນ ເພື່ອບັນລຸເປົ້າໝາຍ ແລະ ຜົນປະໂຫຍດທາງທຸລະກິດ"[2]. ໃນກົດໝາຍວ່າດ້ວຍການແຂ່ງຂັນທາງດ້ານທຸລະກິດໄດ້ກໍານົດ,ຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງ, ຕິດຕາມກວດກາການເຄື່ອນໄຫວວຽກງານແຂ່ງຂັນທາງທຸລະກິດ ເພື່ອໃຫ້ວຽກງານດັ່ງກ່າວຖືກຕ້ອງ, ເປັນທໍາ, ໂປ່ງໃສ ມີຄວາມຄ່ອງຕົວ ແລະ ມີຄວາມສະເໝີພາບຕໍ່ໜ້າກົດໝາຍ ແນໃສ່ຕ້ານ ແລະ ສະກັດກັ້ນການແຂ່ງຂັນທີ່ບໍ່ເປັນທໍາ ແລະ ການຈໍາກັດການແຂ່ງຂັນທາງທຸລະກິດ,ປົກປ້ອງສິດ ແລະ ຜົນປະໂຫຍດຂອງລັດ, ຜູ້ດໍາເນີນທຸລະກິດ ແລະ ຜູ້ຊົມໃຊ້, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດໃຫ້ຂະຫຍາຍຕົວ ແລະ ໝັ້ນຄົງ.

ໃນການເຄື່ອນໄຫວດໍາເນີນທຸລະກິດ ຜູ້ດໍາເນີນທຸລະກິດລ້ວນແລ້ວແຕ່ມີການແຂ່ງຂັນກັນ ຊຶ່ງການແຂ່ງຂັນດັ່ງກ່າວສະແດງອອກໃນການແຂ່ງຂັນການຜະລິດ, ການຈັດຊື້, ການຕະຫຼາດ ຫຼື ການຈໍາໜ່າຍສິນຄ້າ ຫຼື ການແຂ່ງຂັນດ້ານການບໍລິການຕ່າງໆ ຊຶ່ງຕ່າງຝ່າຍຕ່າງມຸ້ງຫາຜົນກໍາໄລໃຫ້ກັບທຸລະກິດຂອງຕົນ ໃນບາງກໍລະນີຂອງການແຂ່ງຂັນ ອາດສ້າງຄວາມເສັຍຫາຍ ໃຫ້ກັບທຸລະກິດໃດໜຶ່ງ ຊຶ່ງເປັນຄູ່ແຂ່ງ ເຮັດໃຫ້ທຸລະກິດທີ່ເປັນຄູ່ແຂ່ງບໍ່ສາມາດຈໍາໜ່າຍສິນຄ້າ ຫຼື ໃຫ້ບໍລິການໃດເຊິ່ງ ເປັນສາເຫດມາຈາກການແຂ່ງຂັນ ທີ່ບໍ່ເປັນທໍາຂອງບັນດາຫົວໜ່ວຍທຸລະກິດ ເຫຼົ່ານັ້ນ. ສະນັ້ນ, ເພື່ອເຮັດໃຫ້ການແຂ່ງຂັນດັ່ງກ່າວ ເກີດຄວາມເປັນທໍາແກ່ຜູ້ດໍາເນີນທຸລະກິດ ຫຼື ເພື່ອເປັນການປົກປ້ອງທຸລະກິດຂະໜາດນ້ອຍ ລັດຖະບານແຫ່ງ ສປປ ລາວ ໄດ້ກໍານົດລະບຽບຫຼັກການແຂ່ງຂັນເອົາໄວ້ໃນດໍາລັດ ວ່າດ້ວຍການແຂ່ງຂັນການຄ້າດໍາລັດສະບັບນີ້ວາງອອກ ເພື່ອກໍານົດລະບຽບຕ້ານການຂັນທາງການຄ້າທີ່ບໍ່ເປັນທໍາໃນທຸກຮູບການ ແລະ ຕ້ານການ

---

[2] ມາດຕາ 2, ກົດໝາຍວ່າດ້ວຍການແຂ່ງຂັນທາງທຸລະກິດ, ສະບັບເລກທີ 60/ສພຊ, ລົງວັນທີ14 ກໍລະກົດ 2015.

ຜູກຂາດໃນທຸລະກິດໃດໜຶ່ງ ເປົ້າໝາຍແນໃສ່ສົ່ງເສີມການແຂ່ງຂັນທີ່ເປັນທຳ ປົກປ້ອງ ສິດຜົນປະໂຫຍດອັນຊອບທຳຂອງຜູ້ຊົມໃຊ້ ພ້ອມດຽວກັນເປັນການຊຸກຍູ້ການເຄື່ອນໄຫວທຸລະກິດຢູ່ໃນ ສປປ ລາວ ໃຫ້ດຳເນີນຕາມກົນໄກເສດຖະກິດຕະຫຼາດທີ່ມີການຄຸ້ມຄອງຂອງລັດຢ່າງມີປະສິດທິຜົນ.

ໃນການສົ່ງເສີມການແຂ່ງຂັນການຄ້ານີ້ ແມ່ນແນໃສ່ການສົ່ງເສີມການຄ້າທີ່ເປັນທຳພາຍໃຕ້ເງື່ອນໄຂແຂ່ງຂັນການຄ້າທີ່ມີຄວາມສະເໝີພາບ, ເປັນທຳ, ທັງຮ່ວມມື, ທັງແຂ່ງຂັນຢ່າງຕັ້ງໜ້າຊຶ່ງເປົ້າໝາຍການແຂ່ງຂັນແມ່ນຕ້ານ ການຜູກຂາດ ຫຼື ການຄອບຄອງເໜືອຕະຫຼາດ ຫຼື ເປັນການເອົາລັດເອົາປຽບແກ່ທຸລະກິດອື່ນ ສຳລັບການແຂ່ງຂັນ ການຄ້າແມ່ນໄດ້ມີການຈັດຕັ້ງໃຫ້ມີຄະນະກຳມະການແຂ່ງຂັນການຄ້າຊຶ່ງຄະນະດັ່ງກ່າວປະກອບມີ:

1) ຂະແໜງການຄ້າໂດຍແມ່ນກົມການຄ້າພາຍໃນ;

2) ຜູ້ຊົງວຸດທິຈຳນວນໜຶ່ງ.

ໃນຄະນະກຳມະການແຂ່ງຂັນການຄ້ານີ້ ແມ່ນລັດຖະມົນຕີກະຊວງການຄ້າເປັນປະທານ ໂດຍຕຳແໜ່ງຄະນະກຳມະການດັ່ງກ່າວນີ້ມີຫ້ອງການ ແລະ ກອງເລຂາປະຈຳຢູ່ກະຊວງການຄ້າ ສ່ວນສິດ, ໜ້າທີ່ ແລະ ພາລະບົດບາດຂອງຄະນະດັ່ງກ່າວ ແມ່ນໄດ້ກຳນົດເອົາໄວ້ດັ່ງນີ້:

- ຄົ້ນຄວ້າລະບຽບການກ່ຽວກັບການເຄື່ອນໄຫວວຽກງານ, ສິດ ແລະ ໜ້າທີ່ຂອງກອງເລຂາ, ພ້ອມທັງຊີ້ນຳນຳພາຈັດຕັ້ງປະຕິບັດວຽກງານຂອງກອງເລຂາດັ່ງກ່າວ;
- ຄົ້ນຄວ້າອອກລະບຽບການເພີ່ມເຕີມໃນການຈັດຕັ້ງປະຕິບັດດຳລັດໃນການແຂ່ງຂັນການຄ້າ ສະບັບເລກທີ 15/ສນຍ, ລົງວັນທີ 04 ກຸມພາ 2004;
- ສ້າງຕັ້ງອະນຸກຳມະການເພື່ອປະຕິບັດໜ້າທີ່ສະເພາະໃດໜຶ່ງເມື່ອມີຄວາມຈຳເປັນ;
- ພິຈາລະນາຄຳຮ້ອງຂໍ ແລະ ອອກອະນຸຍາດໃຫ້ແກ່ຜູ້ດຳເນີນທຸລະກິດໃດໜຶ່ງ;
- ກຳນົດ ແລະ ແຈ້ງບັນຊີພາກສ່ວນ ແລະ ປະເພດທຸລະກິດ;
- ຮຽກບຸກຄົນທີ່ກ່ຽວຂ້ອງເຂົ້າພົບເພື່ອປຶກສາຫາລື ຫຼື ໃຫ້ຄຳແນະນຳ ຫຼື ຄວາມກະຈ່າງແຈ້ງໃນບັນຫາຕ່າງ ທີ່ກ່ຽວຂ້ອງ;
- ຕິດຕາມກວດກາການເຄື່ອນໄຫວດ້ານທຸລະກິດການຄ້າ ແລະ ສັ່ງໃຫ້ຜູ້ດຳເນີນທຸລະກິດໃດໜຶ່ງແກ້ໄຂ, ປ່ຽນແປງ, ໂຈະຊົ່ວຄາວ ຫຼື ຢຸດເຊົາການກະທຳຂອງຕົນທີ່ເຫັນວ່າບໍ່ເປັນທຳ;
- ກຳນົດສ່ວນແບ່ງຕະຫຼາດ, ຍອດເງິນຈຳໜ່າຍຂອງຜູ້ດຳເນີນທຸລະກິດທີ່ຖືວ່າຄອບຄອງເໜືອຕະຫຼາດ;
- ກຳນົດຍອດຈຳໜ່າຍຮຸ້ນ ຫຼື  ຊັບສິນທີ່ຖືວ່າຄວບຄຸມການບໍລິການ ບໍລິຫານທຸລະກິດຂອງຜູ້ດຳເນີນທຸລະກິດອື່ນໆ;
- ພິຈາລະນາຄຳຮ້ອງທຸກຜູ້ດຳເນີນທຸລະກິດ ແລະ ຜູ້ຊົມໃຊ້;
- ສະເໜີໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງນຳໃຊ້ມາດຕະການຕໍ່ຜູ້ລະເມີດ;
- ປະສານສົມທົບກັບອົງການສື່ມວນຊົນ ແລະ ບັນດາຫົວໜ່ວຍທຸລະກິດທີ່ກ່ຽວຂ້ອງເພື່ອແຈ້ງຂໍ້ມູນຂ່າວ ສານໂຄສະນາວຽກງານ ແລະ ບັນຫາຕ່າງໆທີ່ກ່ຽວຂ້ອງກັບການແຂ່ງຂັນການຄ້າໃຫ້ສາທາລະນະຊົນຊາບ;
- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງລັດຖະບານ.

ຕາມກົດໝາຍວ່າດ້ວຍການແຂ່ງຂັນທາງທຸລະກິດໄດ້ກຳນົດຫຼັກການກ່ຽວກັບວຽກງານແຂ່ງຂັນທາງທຸລະກິດໃຫ້ປະຕິບັດຕາມຫຼັກການພື້ນຕໍ່ດັ່ງນີ້:

1)ຮັບປະກັນຄວາມສອດຄ່ອງກັບນະໂຍບາຍ, ກົດໝາຍ ແລະ ລະບຽບການ;

2)ຮັບປະກັນສິດ ແລະ ຜົນປະໂຫຍດຂອງລັດ, ຜູ້ດຳເນີນທຸລະກິດ ແລະ ຜູ້ຊົມໃຊ;

3)ຮັບປະກັນຄວາມສະເໝີພາບ, ຄວາມໂປ່ງໃສ ແລະ ຄວາມຍຸຕິທຳໃນການແຂ່ງຂັນທາງທຸລະກິດ;

4)ຮັບປະກັນການຜະລິດ, ການຈຳໜ່າຍສິນຄ້າ ແລະ ການບໍລິການທີ່ດີ, ມີຄຸນນະພາບ,ໄດ້ມາດຕະຖານ ແລະ ລາຄາທີ່ເປັນທຳ.

ລັດເປີດກວ້າງ ແລະ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານແຂ່ງຂັນທາງທຸລະກິດດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກນິກວິທະຍາສາດ, ເຕັກໂນໂລຊີ, ການຝຶກອົບຮົມ ແລະ ການຍົກລະດັບຄວາມຮູ້ຄວາມສາມາດທາງວິຊາການ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິຜົນ ແລະ ປະຕິບັດຕາມສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

**1.1.4. ຫຼັກການບໍລິການລົງທຶນປະຕູດຽວ-One Stop Service**

ເພື່ອຜັນຂະຫຍາຍເນື້ອໃນຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍກ່ຽວຂ້ອງໃຫ້ຖືກຈັດຕັ້ງປະຕິບັດຢ່າງວ່ອງໄວ ແລະ ແຈ້ງ, ໂດຍສະເພາະການປັບປຸງ ລະບົບການບໍລິການ ການລົງທຶນປະຕູດຽວ ແລະ ການດຳເນີນທຸລະກິດຢູ່ ສປປ ລາວ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ ແລະ ເປັນເອກະພາບໃນການສົ່ງເສີມ, ຄຸ້ມຄອງການລົງທຶນ ແລະ ອຳນວຍຄວາມສະດວກໃນການດຳເນີນທຸລະກິດທັງພາຍໃນ ແລະ ຕ່າງປະ ເທດໃນຂອບເຂດທົ່ວປະເທດ, ຍົກລະດັບຄວາມສັກສິດໃນການປະຕິບັດກົດໝາຍ, ເພີ່ມທະວີຄວາມອາດສາມາດໃນການແຂ່ງຂັນດຶງດູດການລົງທຶນ ແລະ ເພື່ອໃຫ້ການລົງທຶນຂອງພາກເອກະຊົນສາມາດປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ລັດຖະບານໄດ້ອອກຄຳສັ່ງໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນໃນຂອບເຂດທົ່ວປະເທດທີ່ມີຄວາມຮັບຜິດຊອບກ່ຽວກັບວຽກງານສົ່ງເສີມການລົງທຶນ, ການບໍລິຫານ ການລົງທຶນປະຕູດຽວຢູ່ແຕ່ລະຂະແໜງການ ແລະ ໜ່ວຍງານທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນໃຫ້ຮີບຮ້ອນແກ້ໄຂບັນດາຂອດຂັ້ນ, ກຳນົດເວລາ ແລະ ສິ່ງກີດຂວາງ ທີ່ເປັນອຸປະສັກແກ່ການອະນຸຍາດລົງທຶນ ແລະ ການດຳເນີນທຸລະກິດຢູ່ ສປປ ລາວ.

ການບໍລິການລົງທຶນປະຕູດຽວແມ່ນການບໍລິການທີ່ເອື້ອອຳນວຍຄວາມສະດວກຮອບດ້ານໃຫ້ແກ່ຜູ້ລົງທຶນ ດ້ວຍການບໍລິການຂໍ້ມູນຂ່າວສານ, ການພິຈາລະນາການລົງທຶນ, ການອອກໃບທະບຽນວິສາຫະກິດ, ໃບທະບຽນສຳ ປະທານ , ໃບທະບຽນອາກອນ ແລະ ການອອກໃບແຈ້ງການຕ່າງໆ ກ່ຽວກັບການລົງທຶນ ແມ່ນມອບໃຫ້ຫ້ອງການບໍ ລິຫານການລົງທຶນປະຕູດຽວ One Stop Service ເປັນຜູ້ຮັບຜິດຊອບ.

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງໄດ້ກຳນົດ ຫຼັກການບໍລິການລົງທຶນປະຕູດຽວດັ່ງນີ້:

(1). ເປັນສູນລວມການບໍລິການ ການລົງທຶນໃຫ້ແກ່ຜູ້ລົງທຶນ ທີ່ລົງທຶນໃນກິດຈະການທົ່ວໄປ, ຄວບຄຸມ, ສຳປະທານ, ການລົງທຶນຮ່ວມພາກລັດ ແລະ ເອກະຊົນ ແລະ ການພັດທະນາເຂດເສດຖະກິດພິເສດໃຫ້ມີຄວາມກະທັດຮັດ, ວ່ອງໄວ, ໂປ່ງໃສ, ສອດຄ່ອງຕາມກົດໝາຍ ແລະ ລະບຽບການ;

(2). ຜູ້ລົງທຶນສະເໜີລົງທຶນຢູ່ບ່ອນໃດ ແມ່ນໄດ້ຮັບຄຳຕອບຢູ່ບ່ອນນັ້ນ, ການໃຫ້ຄຳຕອບແກ່ຜູ້ລົງທຶນຕ້ອງປະຕິບັດຕາມກຳນົດເວລາທີ່ບົ່ງໄວ້ໃນລະບຽບການທີ່ປະກາດແຈ້ງຢູ່ຫ້ອງການບໍລິການການລົງທຶນປະຕູດຽວ;

(3). ເປັນເຈົ້າການປະສານງານກັບຂະແໜງການທີ່ກ່ຽວຂ້ອງ ບົນພື້ນຖານການປະຕິບັດຕາມລະບຽບການຂອງ ຂະແໜງການທີ່ກ່ຽວຂ້ອງ;

(4). ລວມສູນການເກັບກຳຂໍ້ມູນ, ຕິດຕາມການຈັດຕັ້ງປະຕິບັດ, ສັງລວມຕີລາຄາປະເມີນຜົນສະພາບການ ລົງທຶນ ແລະ ໂຄງການລົງທຶນຂອງພາກເອກະຊົນ;

(5). ການຕົກລົງບັນຫາຕ່າງໆກ່ຽວກັບການລົງທຶນຕ້ອງຜ່ານກອງປະຊຸມຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງ ການລົງທຶນ"[3]

ຫ້ອງການບໍລິການການລົງທຶນປະຕູດຽວ ຂຽນ ຫຍໍ້ວ່າ "ຫລປ" ແມ່ນຫ້ອງການປະຈຳການ ຂອງຄະນະກຳມະ ການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ເພື່ອປະຕິບັດໜ້າທີ່ການບໍລິການ ການລົງທຶນຜ່ານປະຕູດຽວໃຫ້ແກ່ ຜູ້ລົງທຶນ ຢູ່ສປປ ລາວ, ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສົ່ງເສີມການລົງທຶນ.

ຫ້ອງການບໍລິການການລົງທຶນປະຕູດຽວ ມີ 2 ຂັ້ນ ຄື:

+ ຫ້ອງການບໍລິການການລົງທຶນປະຕູດຽວ ຂັ້ນສູນກາງ ຂຽນຫຍໍ້ວ່າ "ຫລປ.ສ";

ຫ້ອງການບໍລິການການລົງທຶນປະຕູດຽວ ຂັ້ນສູນກາງ ຕັ້ງຢູ່ກະຊວງ ຜທ ມີຄະນະວິຊາການຮັບຜິດຊອບຜູ້ຕາງໜ້າຈາກ:

- ກະຊວງແຜນການ ແລະ ການລົງທຶນ;
- ກະຊວງອຸດສາຫະກຳ ແລະ ການຄ້າ;
- ກະຊວງການເງິນ;
- ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
- ກະຊວງພະລັງງານ ແລະ ບໍ່ແຮ່;
- ກະຊວງກະສິກຳ ແລະ ປ່າໄມ້;
- ກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
- ກະຊວງຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວ;
- ກະຊວງປ້ອງກັນຄວາມສະຫງົບ.

ແຕ່ລະກະຊວງ, ອົງການລັດທຽບເທົ່າກະຊວງ ມີໜ້າທີ່ສ້າງຕັ້ງໜ່ວຍງານປະສານງານການບໍລິການການລົງ ທຶນປະຕູດຽວປະຈຳອົງການຂອງຕົນໂດຍພາຍໃຕ້ການຊີ້ນຳຂອງລັດຖະມົນຕີ ຫຼື ຮອງລັດຖະມົນຕີ ຂອງກະຊວງ ກ່ຽວຂ້ອງ ທີ່ເປັນຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ.

ລັດຖະບານ ເປັນຜູ້ກຳນົດລະບຽບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງໜ່ວຍງານປະສານງານ ການບໍລິການປະຕູດຽວ ຂັ້ນສູນກາງ ແລະ ຂັ້ນແຂວງ.

+ ຫ້ອງການ ບໍລິການ ການລົງທຶນປະຕູດຽວ ຂັ້ນແຂວງ ຂຽນຫຍໍ້ວ່າ "ຫລປ.ຂ".

[3] ມາດຕາ 15, ຂໍ້ຕົກລົງຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ, ສະບັບເລກທີ 002/ຄລທ.ສ, ລົງວັນທີ 20 ສິງຫາ 2018 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການບໍລິການ ການລົງທຶນປະຕູດຽວ ແລະ ໜ່ວຍງານປະສານງານການບໍລິການການລົງທຶນປະຕູດຽວຂັ້ນສູນກາງ.

ຫ້ອງການບໍລິການ ການລົງທຶນ ປະຕູດຽວ ຂັ້ນແຂວງ ຕັ້ງຢູ່ ພະແນກ ຜທ ໂດຍມີຄະນະວິຊາການຮັບຜິດ ຊອບ ປະກອບດ້ວຍຜູ້ຕາງໜ້າຈາກ:

- ພະແນກ ແຜນການ ແລະ ການລົງທຶນ;
- ພະແນກ ອຸດສາຫະກໍາ ແລະ ການຄ້າ ;
- ພະແນກການເງິນ; ພະແນກ ພະລັງງານ ແລະ ບໍ່ແຮ່;
- ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ;
- ພະແນກກະສິກໍາ ແລະ ປ່າໄມ້;
- ພະແນກແຮງງານ ແລະ ສະຫວັດດີການສັງຄົມ;
- ພະແນກໂຍທາທິການ ແລະ ຂົນສົ່ງ;
- ພະແນກຖະ ແຫຼງຂ່າວ ວັດທະນະທໍາ ແລະ ທ່ອງທ່ຽວ;
- ກອງບັນຊາການປ້ອງ ກັນຄວາມສະຫງົບ.

ແຕ່ລະພະແນກຂັ້ນແຂວງ ມີໜ້າທີ່ສ້າງຕັ້ງໜ່ວຍງານປະສານງານການບໍລິການການລົງທຶນປະຕູ ດຽວປະຈໍາພະ ແນກຂອງຕົນ ໂດຍພາຍໃຕ້ການຊີ້ນໍາຂອງຫົວໜ້າພະແນກກ່ຽວຂ້ອງທີ່ເປັນຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງ ການລົງທຶນຂັ້ນແຂວງ.

ຫ້ອງການບໍລິການລົງທຶນປະຕູດຽວຖືກສ້າງຕັ້ງຂຶ້ນຄື:

- ຂະແໜງການແຜນການ ແລະ ການລົງທຶນ ສໍາລັບການລົງທຶນໃນກິດຈະການສໍາປະທານ;
- ຂະແໜງການອຸດສາຫະກໍາ ແລະ ການຄ້າ ສໍາລັບການລົງທຶນໃນກິດຈະການທົ່ວໄປ ແລະ ກິດຈະການ ພັດທະນາ ເຂດເສດຖະກິດສະເພາະ;
- ເຂດເສດຖະກິດສະເພາະ ສໍາລັບການລົງທຶນເຂົ້າໃນເຂດດັ່ງນີ້:
- ສ່ວນການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຫ້ອງການບໍລິຫານລົງທຶນປະຕູດຽວໄດ້ຖືກກໍານົດໄວ້ ໃນ ລະບຽບການສະເພາະ.

  \+ ສໍາລັບບັນດາຫຼັກການບໍລິການລົງທຶນປະຕູດຽວປະກອບດ້ວຍ 7 ຫຼັກການດັ່ງນີ້:

- ຜູ້ລົງທຶນສະເໜີລົງທຶນຢູ່ບ່ອນໃດແມ່ນໃຫ້ໄດ້ຮັບຄໍາຕອບຢູ່ບ່ອນນັ້ນສ່ວນການໃຫ້ຄໍາຕອບແກ່ຜູ້ລົງທຶນໃຫ້ ປະຕິບັດຕາລະບຽບການຂອງຫ້ອງການບໍລິການລົງທຶນປະຕູດຽວ;
- ການສະເໜີລົງທຶນສາມາດດໍາເນີນດ້ວຍຜູ້ລົງທຶນເອງ ຫຼື ຜ່ານຕົວແທນທີ່ຖືກຕ້ອງຕາມກົດໝາຍ;
- ການບໍລິການຕ້ອງຮັບຜິດຊອບໃນການສະໜອງຂໍ້ມູນຂ່າວສານ ແລະ ການແກ້ໄຂບັນຫາທີ່ເກີດຂຶ້ນກັບຜູ້ລົງທຶນ;
- ຄ່າທໍານຽມ ແລະ ຄ່າບໍລິການຕ້ອງປະກາດຢ່າງເປີດເຜີຍ ແລະ ຕິດຢູ່ບ່ອນສະຖານທີ່ບໍລິການລົງທຶນປະຕູດຽວ;
- ການບໍລິການຕ້ອງເປັນໄປຕາມລະບຽບການ, ມີແບບແຜນວິທີເຮັດວຽກກະທັດຮັດ, ວ່ອງໄວ, ປະຢັດ ສ້າງ, ໂປ່ງ ໃສ, ເປີດເຜີຍ ແລະ ສາມາດກວດສອບໄດ້;
- ການຕົກລົງບັນຫາຕ່າງໆກ່ຽວກັບການລົງທຶນຕ້ອງຜ່ານກອງປະຊຸມຂອງຫ້ອງການບໍລິການລົງທຶນປະຕູດຽວ.

  ຫຼັກການບໍລິການ ການລົງທຶນປະຕູດຽວ ມີດັ່ງນີ້:

1) ເປັນສູນລວມການບໍລິການການລົງທຶນໃຫ້ແກ່ຜູ້ລົງທຶນທີ່ລົງທຶນໃນກິດຈະການທົ່ວໄປ, ສຳປະທານ ແລະ ການພັດທະນາເຂດເສດຖະກິດພິເສດໃຫ້ມີຄວາມກະທັດຮັດ,ວ່ອງໄວ, ໂປ່ງໃສ ແລະ ທັນການ;

2) ເປັນ ເຈົ້າ ການປະສານງານກັບຂະແໜງການ ທີ່ກ່ຽວຂ້ອງ ບົນພື້ນຖານການປະຕິບັດຕາມ ລະບຽບການ ຂອງຂະແໜງການທີ່ກ່ຽວຂ້ອງ;

3) ລວມສູນການເກັບກຳຂໍ້ມູນ, ຕິດຕາມການຈັດຕັ້ງປະຕິບັດ,ສັງ ລວມຕີລາຄາປະເມີນຜົນສະພາບການລົງທຶນ ແລະ ໂຄງການລົງທຶນຂອງພາກເອກະຊົນ.

**1.1.5. ຫຼັກການຜົນປະໂຫຍດຮ່ວມກັນ**

ໃນການດຳເນີນທຸລະກິດ ບໍ່ວ່າຈະເປັນທຸລະກິດຂະໜາດນ້ອຍ, ຂະໜາດກາງ, ຂະໜາດໃຫຍ່ຜູ້ປະກອບທຶນສ້າງຕັ້ງກໍ່ຈະເອີ້ນວ່າ ຂາຮຸ້ນ ຫຼື ຜູ້ຖືຮຸ້ນ ອີງຕາມແຕ່ລະຮູບການຂອງທຸລະກິດນັ້ນໆ ບັນດາຂາຮຸ້ນ ຫຼື ຜູ້ຖືຮຸ້ນທີ່ກ່າວ ມານີ້ຈະຕ້ອງໄດ້ຮັບສິດຜົນປະໂຫຍດຮ່ວມກັນຕາມສັນຍາຮ່ວມທຶນໃນເວລາສ້າງຕັ້ງເຊັ່ນ: ສິດຜົນປະໂຫຍດຂອງວິສາຫະກິດຮຸ້ນສ່ວນສາມາດກຳນົດໄວ້ວ່າ:

ຂາຮຸ້ນທຸກຄົນລ້ວນແລ້ວ ແຕ່ຕ້ອງມີສິດໄດ້ຮັບຜົນປະໂຫຍດ ຂອງວິສາຫະກິດຮຸ້ນສ່ວນສາມັນທີ່ໄດ້ມາຈາກການພົວພັນພາຍນອກໃນນາມວິສາຫະກິດບໍ່ວ່າຜົນປະໂຫຍດມັນຈະໄດ້ມາຈາກການໃຊ້ຊື່ຂອງວິສາຫະກິດຮຸ້ນສ່ວນສາມັນ ຫຼື ບໍ່ໃຊ້ຊື່ນັ້ນກໍ່ຕາມ.

ນອກຈາກສິດຜົນປະໂຫຍດແລ້ວຜູ້ລົງທຶນເປັນຂາຮຸ້ນ ຫຼື ຜູ້ຖືຮຸ້ນຍັງຕ້ອງມີຄວາມຮັບຜິດຊອບຮ່ວມກັນ ຊຶ່ງຄວາມຮັບຜິດຊອບອາດມີທັງຮັບຜິດຊອບໃນການບໍລິການ ຫຼື ຮັບຜິດຊອບດ້ານອື່ນໆເຊັ່ນດ້ານໜີ້ສິນ ຊຶ່ງໜີ້ສິນອາດມາຈາການກູ້ຢືມ ເພື່ອເປັນເງິນໝູນວຽນ ຫຼື ເກີດຈາກການຂາດທຶນ ຂອງດຳເນີນທຸລະກິດໃນໄລຍະຖືຮຸ້ນຮ່ວມກັນ ເຊັ່ນຄວາມຮັບຜິດຊອບຂອງວິສາຫະກິດຮຸ້ນສ່ວນສາມັນກຳນົດໃຫ້ຂາຮຸ້ນແຕ່ລະຄົນຕ້ອງຮັບຜິດຊອບຕໍ່ໜີ້ສິນຂອງວິສາຫະກິດໂດຍບໍ່ຈຳກັດເຈົ້າໜີ້ມີສິດທວງເອົາໜີ້ນຳແຕ່ລະຂາຮຸ້ນໄດ້ພາຍຫຼັງທີ່ໄດ້ທວງນຳວິສາຫະກິດແລ້ວແຕ່ບໍ່ໄດ້ຮັບການຊຳລະ.

ບັນດາຂາຮຸ້ນດັ່ງກ່າວສາມາດຕົກລົງ ກ່ຽວກັບອັດຕາສ່ວນຮັບຜິດຊອບຂອງແຕ່ລະຄົນຕໍ່ໜີ້ສິນ ຫຼື ການຂາດ ທຶນຂອງວິສາຫະກິດ. ຂາຮຸ້ນຈະຮັບຜິດຊອບຕໍ່ໜີ້ສິນກໍ່ຕໍ່ເມື່ອ:

- ເປັນໜີ້ສິນທີ່ເກີດຂຶ້ນຈາກການປະຕິບັດໜ້າທີ່ຕາມກົດລະບຽບຂອງວິສາຫະກິດ ຫຼື ຜູ້ຈັດການທີ່ຂາຮຸ້ນຕົກລົງ ໃຫ້ມາບໍລິຫານຈັດການ;
- ເປັນໜີ້ສິນທີ່ເກີດຂຶ້ນຈາກການປະຕິບັດໜ້າທີ່ໃດໜຶ່ງເພື່ອບັນລຸວັດຖຸປະສົງຂອງວິສາຫະກິດຊຶ່ງການກະທຳດັ່ງກ່າວແມ່ນ ຖືກຮັບຮອງຈາກຂາຮຸ້ນຂອງວິສາຫະກິດນັ້ນແລ້ວ.

**1.2. ຫຼັກການຄຸ້ມຄອງຂອງລັດ**

ຫຼັກການຄຸ້ມຄອງຂອງລັດໝາຍເຖິງລັດຜູ້ລົງທຶນ ຕ້ອງໃຫ້ການຄຸ້ມຄອງຜູ້ລົງທຶນ ຊຶ່ງມາລົງທຶນຢູ່ໃນປະເທດ ຂອງຕົນໃນຫຼັກການຄຸ້ມຄອງຂອງລັດນີ້ ຕ້ອງແມ່ນອີງການນິຕິບັນຍັດເປັນຜູ້ກຳນົດ ຊຶ່ງການກຳນົດນີ້ອາດຈະກຳ ນົດນະໂຍບາຍ, ການນຳໃຊ້ກົດໝາຍເຂົ້າໃນການຄຸ້ມຄອງຜູ້ລົງທຶນ ເພື່ອເປັນການດຶງດູດເອົາຜູ້ລົງທຶນພາຍໃນ ແລະ ຕ່າງປະເທດໃຫ້ມີການຕັດສິນໃຈລົງທຶນໃນຫຼັກການຄຸ້ມຄອງ ແລະ ການສົ່ງເສີມການລົງທຶນ ເປັນສິ່ງຈູງໃຈຂັ້ນພື້ນຖານທີ່ລັດຜູ້ຮັບລົງທຶນຈະຕ້ອງກຳນົດຂຶ້ນເປັນທີ່ແນ່ນອນ ຖາວອນລວມເຖິງຄວາມໝັ້ນຄົງຂອງຊາດ ແລະ ເປັນການຮັບປະກັນທາງດ້ານການເມືອງ ແລະ ໃນຫຼັກການການຄຸ້ມຄອງຂອງລັດປະກອບດ້ວຍ 2 ຫຼັກການໃຫຍ່ທີ່ ສຳຄັນຕໍ່ເສດຖະກິດ ຫຼັກການຮັບປະກັນທາງດ້ານການເມືອງ ແລະ ຫຼັກການຮັບປະກັນທາງດ້ານເສດຖະກິດ.

ລັດຖະບານໄດ້ກຳນົດຫຼັກການໃນການຄຸ້ມຄອງການລົງທຶນດັ່ງຄື:ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ (ຄລທ)- The Government of the Lao PDR established the Committee for Investment Promotion (CIP):

(1). ປະຕິບັດຫຼັກການລວມສູນປະຊາທິປະໄຕ ແລະ ຕົກລົງເປັນໝູ່ຄະນະກ່ຽວກັບວຽກງານຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ;

(2). ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວ ຄິດປະດິດສ້າງຂອງສະມາຊິກໃນຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ;

(3). ທຸກການເຄື່ອນໄຫວຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ແລະ ພະນັກງານລັດຖະກອນ, ກົງຈັກຊ່ວຍວຽກຂອງຄະນະແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງລັດຖະບານ, ນຳເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ຫຼື ອົງການບໍລິຫານຂັ້ນແຂວງມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ;

(4). ສົມທົບແໜ້ນກັບການເພີ່ມທະວີການຄຸ້ມຄອງຂອງລັດຢ່າງລວມສູນເປັນເອກະພາບໃນທົ່ວປະເທດ;

(5). ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງລັດ, ລວມໝູ່, ປະຊາຊົນ ແລະ ຜູ້ລົງທຶນ;

(6). ຮັບປະກັນການບໍລິການການລົງທຶນປະຕູດຽວໃຫ້ສະດວກ, ກະທັດຮັດ, ວ່ອງໄວ, ໂປ່ງໃສ, ມີປະສິດທິພາບ ແລະ ຖືກຕ້ອງຕາມກົດໝາຍ"[4].

### 1.2.1. ຫຼັກການຮັບປະກັນທາງດ້ານການເມືອງ

ຫຼັກການຮັບປະກັນທາງດ້ານການເມືອງ ຂອງ ສປປ ລາວ ແມ່ນຖືກກຳນົດການຮັບປະກັນສິດຜົນປະໂຫຍດ ອັນຊອບທຳຂອງຜູ້ລົງທຶນຕາມກົດໝາຍຄື: ໃນລັດຖະທຳມະນູນແຫ່ງ ສປປ ລາວ, ມາດຕາ 16 ລັດປົກປ້ອງ ແລະ ເສີມຂະຫຍາຍບັນດາຮູບການກຳມະສິດຂອງລັດ, ລວມໝູ່, ເອກະເທດ, ເອກະຊົນພາຍໃນ ແລະ ຕ່າງປະເທດ ທີ່ລົງ ທຶນຢູ່ໃນ ສປປ ລາວ.

ໃນກໍລະນີທີ່ລັດມີຄວາມຈຳເປັນທີ່ຈະຊົມໃຊ້ຊັບສົມບັດຂອງຫົວໜ່ວຍທຸລະກິດທີ່ເປັນຂອງເອກະຊົນ ລັດຈະເວນຄືນໃຫ້ບົນພື້ນຖານການຕົກລົງຫຼືຕາມລາຄາທ້ອງຕະຫຼາດໃນເວລາທົດແທນຄືນ, ແຕ່ການທົດແທນຄືນໃນປັດຈຸບັນນີ້ກໍຍັງບໍ່ທັນເຮັດໄດ້ດີເທົ່າທີ່ຄວນຍ້ອນຍັງຂາດນິຕິກຳຫຼາຍຢ່າງ, ສະນັ້ນ ໃນການເວນຄືນສ່ວນໃຫຍ່ແມ່ນຂຶ້ນ ຢູ່ກັບການຕົກລົງກັນທັງສອງຝ່າຍຫຼາຍກວ່າ.

ນອກຈາກນັ້ນ, ລັດຈະບໍ່ເຂົ້າໄປແຊກແຊງ ຫຼື ຜະລິດສິນຄ້າ ເພື່ອແຂ່ງຂັນກັບເອກະຊົນລວມທັງການກຳນົດລາຄາສິນຄ້າທີ່ຜູ້ຜະລິດຜະລິດໄດ້.

ພ້ອມດຽວກັນ, ລັດຕ້ອງຮັບປະກັນຄວາມໝັ້ນຄົງຂອງຊາດ ເພື່ອບໍ່ໃຫ້ເກີດການແຊກແຊງຈາກລັດອື່ນ ຫຼື ລັດພາຍນອກ ເພື່ອເປັນການຮັບປະກັນຄວາມສະຫງົບສຸກ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ເຮັດໃຫ້ ຜູ້ລົງທຶນສາມາດລົງທຶນໄດ້ດ້ວຍຄວາມປອດໄພ.

### 1.2.2. ຫຼັກການຮັບປະກັນທາງດ້ານເສດຖະກິດ

ຫຼັກການຮັບປະກັນທາງດ້ານເສດຖະກິດ ໝາຍເຖິງຫຼັກການຮັບປະກັນໃຫ້ບັນດາຫົວໜ່ວຍທຸລະກິດທີ່ເຄື່ອນໄຫວຢູ່ ສປປ ລາວ ສາມາດເຄື່ອນໄຫວທຸລະກິດໄດ້ຢ່າງເສລີຖືກກົດຫມາຍ ເຊັ່ນ: ການຈໍລະຈອນເງິນຕາ, ການຕະຫຼາດຈຳໜ່າຍສິນຄ້າ, ຮັບປະກັນການສົ່ງອອກຕ່າງໆ ບັນດາຫຼັກການດັ່ງກ່າວ ປະກອບດ້ວຍ 4 ຫຼັກການນ້ອຍຄື:

[4] ມາດຕາ 7, ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ, ສະບັບເລກທີ 05/ນຍ,ລົງວັນທີ 05 ມັງກອນ 2018.

ຫຼັກການຮັບປະກັນໂດຍລັດ, ຫຼັກການຮັບປະກັນການສົ່ງອອກ, ຫຼັກການຄຸ້ມຄອງທຸລະກິດ ແລະ ຫຼັກການຮັບປະ ກັນທາງດ້ານການເງິນ.

**ກ. ການຮັບປະກັນໂດຍລັດ**

ການຮັບປະກັນໂດຍລັດ ໝາຍເຖິງການຮັບປະກັນການແຂ່ງຂັນທາງດ້ານເສດຖະກິດ, ການຜະລິດ ຫຼື ການບໍ ລິການຂອງລັດ ຢູ່ໃນ ສປປລາວ ລັດໄດ້ມີດຳລັດວ່າດ້ວຍການແຂ່ງຂັນການຄ້າ ສະບັບເລກທີ 15/ສນຍ ລົງວັນທີ 4 ກຸມພາ 2004 ໂດຍດຳລັດດັ່ງກ່າວກໍແນໃສ່ຕ້ານການຜູກຂາດເໜືອຕະຫຼາດ ຫຼື ການທຸ້ມຕະຫຼາດ ແລະ ຕ້ານການ ການແຂ່ງຂັນການຄ້າທີ່ບໍ່ເປັນທຳ ເຊິ່ງເປັນການເອົາປຽບແກ່ທຸລະກິດຂະໜາດນ້ອຍ ແລະ ຕ້ານການແຂ່ງຂັນການຜະ ລິດສິນຄ້າຂອງລັດກັບເອກະຊົນ.

**ຂ. ຫຼັກການຮັບປະກັນການສົ່ງອອກ**

ເພື່ອໃຫ້ເຂົ້າໃຈກ່ຽວກັບຫຼັກການນີ້, ກ່ອນອື່ນໝົດພວກເຮົາຕ້ອງເຂົ້າໃຈວ່າ ການສົ່ງອອກແມ່ນຫຍັງ? "ການນຳເຂົ້າ ແລະ ສົ່ງອອກແມ່ນການນຳເອົາສິນຄ້າເຂົ້າມາ ສປປ ລາວ ຫຼື ສົ່ງອອກຈາກ ສປປ ລາວ ລວມທັງການນຳເຂົ້າຊົ່ວຄາວ, ການສົ່ງອອກຊົ່ວຄາວ ແລະ ການຜ່ານແດນຕາມທີ່ໄດ້ກຳນົດໃນລະບຽບການ ຫຼື ດຳລັດຂອງລັດຖະ ບານ"[5]. ສະນັ້ນ, ຈຶ່ງເວົ້າໄດ້ວ່າ ການສົ່ງອອກແມ່ນ ການນຳເອົາສິນຄ້າເຂົ້າມາ ສປປ ລາວ ລວມທັງການສົ່ງອອກຊົ່ວຄາວ ແລະ ການຜ່ານແດນຕາມລະບຽບການ.

ການຮັບປະກັນການສົ່ງອອກ ໃນການແຂ່ງຂັນການຄ້າໃນຕະຫຼາດເສລີ ໂດຍຖືເອົາກົນໄກການຕະຫຼາດທີ່ມີ ການດັດສົມຂອງລັດ ຫຼື ກົນໄກການຕະຫຼາດທີ່ຂຶ້ນກັບ demand ແລະ supply ຊຶ່ງລັດສົ່ງເສີມໃຫ້ຜູ້ລົງທຶນ ຫຼື ຜູ້ປະກອບທຸລະກິດຢູ່ໃນ ສປປ ລາວ ສາມາດສົ່ງສິນຄ້າທີ່ຜະລິດຢູ່ໃນປະເທດອອກນອກປະເທດດ້ວຍຮູບການອະນຸ ຍາດໃຫ້ສົ່ງອອກ ຫຼື ອາດຈະໃຫ້ນະໂຍບາຍ ສຳລັບຜູ້ສົ່ງອອກດ້ວຍຫຼາຍຮູບການເຊັ່ນ: ການໃຫ້ນະໂຍບາຍຍົກເວັ້ນ ພາສີສົ່ງອອກ ຫຼື ໃຫ້ນະໂຍບາຍດ້ານອາກອນພາຍໃນ ເຊັ່ນ: ຫຼຸດຜ່ອນອາກອນກຳໄລປະຈຳປີຂອງຫົວໜ່ວຍທຸລະ ກິດທີ່ສາມາດຜະລິດສິນຄ້າສົ່ງອອກໄດ້ຫຼາຍເຊັ່ນ: ກຳນົດໃຫ້ການລົງທຶນໃນເຂດເສດຖະກິດພິເສດສະຫວັນ-ເຊໂນດັ່ງນີ້[6]:

- ຖ້າຜະລິດສິນຄ້າແລ້ວສົ່ງອອກໄປຂາຍຕ່າງປະເທດໄດ້ເຖິງ 70% ຂອງການຜະລິດທັງໝົດຈະໄດ້ຮັບການຍົກເວັ້ນອາກອນກຳໄລເປັນເວລາ 10 ປີ ນັບແຕ່ປີທີ່ມີກຳໄລຕໍ່ມາຈະຖືກເສຍອາກອນກຳໄລໃນອັດຕາ 8%.
- ຖ້າຜະລິດສິນຄ້າແລ້ວສົ່ງອອກໄປຂາຍຕ່າງປະເທດໄດ້ 30%- 69% ຈະຖືກຍົກເວັ້ນອາກອນກຳໄລເປັນ ເວລາ 7 ປີ ນັບແຕ່ປີທີ່ມີກຳໄລ ຫຼັງຈາກນັ້ນຈະຖືກເສຍອາກອນກຳໄລໃນອັດຕາ 8%.
- ຖ້າຜະລິດສິນຄ້າແລ້ວສົ່ງອອກໄປຂາຍຕ່າງປະເທດໄດ້ 30% ລົງມາຈະຖືກຍົກເວັ້ນອາກອນກຳໄລເປັນ ເວລາ 5 ປີນັບແຕ່ປີທີ່ມີກຳໄລຕໍ່ມາຖືກເສຍອາກອນກຳໄລໃນອັດຕາ 8%.
- ຖ້າຜູ້ຜະລິດສິນຄ້າຫາກນຳເອົາວັດຖຸດິບທີ່ມີຢູ່ ໃນ ສປປ ລາວ ໄປຜະລິດໃນເຂດເສດຖະກິດພິເສດຈະເສຍອາກອນກຳໄລໃນອັດຕາ 4%.

ປັດຈຸບັນລັດຖະບານໄດ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການສົ່ງອອກສິນຄ້າ ເພື່ອ ອຳນວຍຄວາມສະດວກ, ຊຸກຍູ້ສົ່ງເສີມ ແລະ ຄຸ້ມຄອງການສົ່ງອອກແນໃສ່ພັດທະນາເສດຖະກິດ-ສັງຄົມໃຫ້ມີຄວາມເຕີບໃຫຍ່ເຂັ້ມແຂງ, ປະກອບສ່ວນເຂົ້າໃນການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນ.

---

[5] ມາດຕາ 2, ດຳລັດວ່າດ້ວຍການນຳເຂົ້າ ແລະ ການສົ່ງອອກສິນຄ້າ,ສະບັບເງກທີ 114/ລບ, ລົງວັນທີ 6 ເມສາ 2011.

[6] ລະບຽບວ່າດ້ວຍການຄຸ້ມຄອງ ແລະນະໂຍບາຍສົ່ງເສີມການລົງທຶນໃນເຂດເສດຖະກິດພິເສດສະຫວັນ-ເຊໂນ, ສະບັບເລກທີ 177/ນຍ, ລົງວັນທີ 13 ພະຈິກ 2003, ມາດຕາ 25

**ຄ. ການຮັບປະກັນການຄຸ້ມຄອງທຸລະກິດທີ່ເກີດຂຶ້ນໃໝ່**

ໃນການຮັບປະກັນການຄຸ້ມຄອງທຸລະກິດທີ່ເກີດຂຶ້ນໃໝ່ ລັດຄວນມີມາດຕະການສະກັດກັ້ນການນຳເຂົ້າສິນຄ້າທີ່ສາມາດຜະລິດໄດ້ຢູ່ໃນ ສປປ ລາວ ຫຼື ນຳໃຊ້ມາດຕະການໃນການຄຸ້ມຄອງທຸລະກິດຂະໜາດນ້ອຍດ້ວຍວິທີການກຳນົດກຳແພງພາສີນຳເຂົ້າ ຫຼື ຂຶ້ນອັດຕາພາສີອາກອນນຳເຂົ້າເຊັ່ນ: ການເກັບອາກອນຊົມໃຊ້ຈາກສິນຄ້າຟູມເຟືອຍ ຫຼື ສິນຄ້າທີ່ບໍ່ມີຄວາມຈຳເປັນແກ່ການບໍລິໂພກ ຫຼື ອຸປະໂພກເພື່ອເຮັດໃຫ້ຊ່ວຍຫຼຸດການນຳເຂົ້າສິນຄ້າເຫຼົ່ານັ້ນ ພ້ອມດຽວກັນກໍຕ້ອງສົ່ງເສີມການສົ່ງອອກສິນຄ້າທີ່ມີ ຫຼື ຜະລິດຢູ່ໃນ ສປປ ລາວ ເພື່ອຊ່ວຍໃຫ້ທຸລະກິດທີ່ເກີດຂຶ້ນໃໝ່ສາ ມາດມີລາຍຮັບເພື່ອທີ່ຈະມາຂະຫຍາຍກິດຈະການໃນອະນາຄົດ.

**ງ. ຫຼັກການຮັບປະກັນທາງດ້ານການເງິນ**

ຜູ້ລົງທຶນຢູ່ໃນ ສປປ ລາວ ຈະມີທັງຄົນລາວ ແລະ ຕ່າງປະເທດ ຊຶ່ງຢູ່ໃນສ່ວນຄົນຕ່າງປະເທດນີ້ອາດມາປະ ກອບທຶນເປັນຂາຮຸ້ນ ຫຼື ຜູ້ຖືຮຸ້ນຮ່ວມກັບຄົນລາວ ຫຼື ຄົນຕ່າງປະເທດດ້ວຍກັນ, ສະນັ້ນ ໃນການລົງທຶນຜູ້ລົງທຶນຕ້ອງໄດ້ນຳເອົາວັດຖຸເງິນຄຳມາປະກອບໃສ່ຫົວໜ່ວຍທຸລະກິດເພື່ອໃຫ້ເປັນທຶນໝູນວຽນ ຫຼື ທຶນເຄື່ອນທີ່.

ນອກຈາກເງິນທຶນທີ່ຜູ້ລົງທຶນເອົາມາລົງທຶນແລ້ວ ຜູ້ລົງທຶນຍັງຕ້ອງໄດ້ຮັບເງິນຈາກສ່ວນແບ່ງໃນສ່ວນທີ່ເປັນກຳໄລ ແລະ ເງິນສ່ວນແບ່ງດັ່ງກ່າວຜູ້ລົງທຶນຕ້ອງໄດ້ສົ່ງກັບຄືນປະເທດຕົນ. ສະນັ້ນ ໃນຫຼັກການຂອງການຮັບປະ ກັນດ້ານການເງິນນີ້ ລັດຄວນກຳນົດໃຫ້ຜູ້ລົງທຶນໄດ້ເຂົ້າໃຈເຖິງການນຳເງິນກຳໄລອອກນອກປະເທດຜູ້ລົງທຶນຕ້ອງໄດ້ປະຕິບັດພັນທະແນວໃດແດ່ຕໍ່ລັດປະເທດລົງທຶນ ຊຶ່ງມີບາງປະເທດພາຍຫຼັງທີ່ຜູ້ລົງທຶນຫາກໄດ້ຮັບເງິນເປັນຜົນ ແລະ ພາຍຫຼັງທີ່ເສຍອາກອນຕ່າງໆຄົບຖ້ວນແລ້ວ ຖ້າຈະນຳເງິນອອກນອກປະເທດ ຜູ້ລົງທຶນຕ້ອງເສຍອາກອນການໂອນເງິນອີກຄັ້ງໜຶ່ງ ຖ້າຫາກບໍ່ນຳເງິນກຳໄລອອກຜູ້ມີກຳໄລກໍບໍ່ຕ້ອງຊຳລະອາກອນໂອນອີກ ສຳລັບໃນສ່ວນນີ້ ສປປ ລາວ ບໍ່ໄດ້ມີການກຳນົດໃຫ້ເກັບພາສີການໂອນເງິນອອກນອກປະເທດມີແຕ່ຜູ້ໂອນ ເສຍຄ່າທຳນຽມການໂອນຂອງທະນາຄານໂດຍ ອີງຕາມລະບຽບການຂອງທະນາຄານທົ່ວໄປເທົ່ານັ້ນ ຊຶ່ງ ເຫັນວ່າເປັນຈຸດດີຢ່າງໜຶ່ງຂອງການຮັບປະກັນທາງດ້ານການ ເງິນຂອງຜູ້ລົງທຶນ ໂດຍສະເພາະຜູ້ລົງທຶນທີ່ເປັນຕ່າງ ປະເທດ.

### 1.3. ຫຼັກການທາງດ້ານກົດໝາຍ

ຫຼັກການທາງດ້ານກົດໝາຍຂອງການລົງທຶນປະກອບມີສອງຫຼັກການດ້ວຍກັນຄື: ຫຼັກການກົດໝາຍສົ່ງເສີມການລົງທຶນ ແລະ ຫຼັກການກົດໝາຍອື່ນໆທີ່ກ່ຽວຂ້ອງ.

### 1.3.1. ຫຼັກການກົດໝາຍສົ່ງເສີມການລົງທຶນ

ກົດໝາຍສົ່ງເສີມການລົງທຶນແມ່ນກົດໝາຍໜຶ່ງ ຊຶ່ງໄດ້ກຳນົດເນື້ອໃນລະອຽດຕ່າງໆເອົາໄວ້ໃນກົດໝາຍເຊັ່ນ: ກຳນົດຈຸດປະສົງຂອງການສົ່ງເສີມການລົງທຶນ, ຫຼັກການ, ນະໂຍບາຍ, ຂອບເຂດການນຳໃຊ້ກົດໝາຍຕະຫຼອດເຖິງການພິຈາລະນາອະນຸມັດໂຄງການ, ສິດ ແລະ ພັນທະຂອງຜູ້ລົງທຶນ, ວິທີການແກ້ໄຂຂໍ້ຂັດແຍ່ງ ແລະ ອົງການຄຸ້ມຄອງ ແລະ ກວດກາການລົງທຶນຢູ່ໃນ ສປປ ລາວ.

ສຳລັບຫຼັກການກ່ຽວກັບການສົ່ງເສີມການລົງທຶນຕ້ອງປະຕິບັດດັ່ງນີ້:

- ສອດຄ່ອງກັບແນວທາງນະໂຍບາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນພັດທະນາຂະ ແໜງການ, ເຂດແຄວ້ນ ແລະ ການຂະຫຍາຍເສດຖະກິດ- ສັງຄົມໃນແຕ່ລະໄລຍະພ້ອມກັນກໍເປັນການຍົກລະດັບຊີ ວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ແລະ ຖືກຕາມລະບຽບການກົດໝາຍ.
- ສົມທົບແໜ້ນກັບການເພີ່ມທະວີຄຸ້ມຄອງຂອງລັດຢ່າງລວມສູນເປັນເອກະພາບໃນທົ່ວປະເທດ.
- ຮັບປະກັນໃຫ້ການລົງທຶນໄດ້ຮັບການບໍລິການສະດວກ, ວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະ ສະເໝີພາບຕໍ່ໜ້າກົດໝາຍດ້ວຍການບໍລິການປະຕູດຽວ.
- ວາງນະໂຍບາຍສົ່ງເສີມດ້ານຕ່າງໆທີ່ສາມາດດຶງດູດ ແລະ ຍາດແຍ່ງເອົາການລົງທຶນ.

- ຮັບຮູ້, ຮັບປະກັນການປົກປ້ອງກຳມະສິດ, ສິດ, ຜົນປະໂຫຍດ ແລະ ດ້ານອື່ນໆທີ່ຖືກຕ້ອງຕາມກົດໝາຍ ຂອງຜູ້ລົງທຶນຈາກລັດ.

- ຮັບປະກັນ, ການປົກປັກຮັກສາ ແລະ ພັດທະນາ, ສິ່ງແວດລ້ອມ, ຄວາມສະຫງົບ ແລະ ຄວາມປອດໄພຂອງສັງຄົມໃນເຂດລົງທຶນ.

**1.3.2. ຫຼັກການກົດໝາຍອື່ນໆທີ່ກ່ຽວຂ້ອງ**

ໃນການລົງທຶນ ຫຼື ການສົ່ງເສີມການລົງທຶນ ຢູ່ໃນ ສປປ ລາວ ນອກຈາກຈະມີກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ຊຶ່ງເປັນກົດໝາຍຫຼັກເປັນບ່ອນອີງໃຫ້ກັບຜູ້ລົງທຶນ ຊຶ່ງມີຈຸດປະສົງ, ເປົ້າໝາຍທີ່ຈະມາລົງທຶນຢູ່ໃນ ສປປ ລາວ ແລ້ວ ກໍຍັງມີກົດໝາຍອື່ນໆອີກເຊັ່ນ: ກົດໝາຍວ່າດ້ວຍວິສາຫະກິດ, ກົດໝາຍພາສີ ແລະ ສ່ວຍສາອາກອນ, ກົດໝາຍປະກັນໄພ, ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງ, ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ, ກົດໝາຍຜັງເມືອງ, ກົດໝາຍການຄໍ້າປະກັນ ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງ ບັນດາກົດໝາຍເຫຼົ່ານີ້ແມ່ນມີ ສ່ວນຊ່ວຍໃນການຕັດສິນໃຈຂອງຜູ້ລົງທຶນມາລົງທຶນໃນ ສປປ ລາວ ໄດ້ໃນລະດັບໜຶ່ງ ເນື່ອງຈາກວ່າກົດໝາຍເຫຼົ່ານີ້ ມີສ່ວນພົວພັນໃນການສ້າງຕັ້ງວິສາຫະກິດ, ການນຳເຂົ້າ-ສົ່ງອອກ, ການຄໍ້າປະກັນໃຫ້ກັບຊັບສິນທີ່ຜູ້ລົງທຶນນຳມາລົງທຶນ, ການເຮັດສັນຍາຮ່ວມທຶນ, ສັນຍາຊື້-ຂາຍ, ແລກປ່ຽນ, ການສ້າງຕັ້ງສຳນັກງານ ແລະ ການແກ້ໄຂຂໍ້ຂັດແຍ່ງທີ່ ເກີດຂຶ້ນຈາກການລົງທຶນຂອງຜູ້ລົງທຶນຢູ່ໃນ ສປປ ລາວ, ພ້ອມດຽວກັນກໍເປັນການຮັບປະກັນ ແລະ ຄຸ້ມຄອງຊັບສິນຂອງຜູ້ລົງທຶນ, ເຮັດໃຫ້ຜູ້ລົງທຶນມີຄວາມໝັ້ນໃຈ ແລະ ສາມາດດຳເນີນທຸລະກິດໄດ້ຢ່າງເສລີບົນພື້ນຖານກົດໝາຍສົ່ງ ເສີມການລົງທຶນ ແລະ ກົດໝາຍອື່ນໆທີ່ມີສ່ວນກ່ຽວຂ້ອງນີ້.

## 2. ການອອກໄປລົງທຶນຢູ່ຕ່າງປະເທດ

ພັກ ແລະ ລັດຖະບານ ຂອງ ສປປ ລາວ ໄດ້ມີນະໂຍບາຍສົ່ງເສີມການລົງທຶນໃຫ້ພົນລະເມືອງລາວອອກໄປ ລົງທຶນຢູ່ຕ່າງປະເທດ, ຊຶ່ງຕ້ອງໄດ້ຍື່ນຄຳຮ້ອງຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວເພື່ອພິຈາລະນາ, ຊຶ່ງໄດ້ກຳ ນົດໃນພາກທີ 5 ຂອງກົດໝາຍການສົ່ງເສີມການລົງທຶນປີ 2016.

### 2.1. ຄວາມໝາຍ ແລະ ຄວາມສຳຄັນຂອງການອອກໄປລົງທຶນຢູ່ຕ່າງປະເທດ

ການອອກໄປລົງທຶນຢູ່ຕ່າງປະເທດ ໝາຍເຖິງນັກລົງທຶນພາຍໃນປະເທດນຳເອົາທຶນ ຫຼື ຖືຮຸ້ນໃນການດຳເນີນທຸລະກິດ ຫຼື ເປັນເຈົ້າຂອງກຳມະສິດໃນການເຄື່ອນໄຫວທຸລະກິດການລົງທຶນນອກປະເທດ ສປປ ລາວ, ພ້ອມດຽວ ກັນນັ້ນກໍເຂົ້າຮ່ວມບໍລິຫານການເຄື່ອນໄຫວການລົງທຶນດັ່ງກ່າວ.

ໃນສະພາບການເປີດກວ້າງການພົວພັນທາງດ້ານເສດຖະກິດໃນປັດຈຸບັນ, ການອອກໄປລົງທຶນຢູ່ຕ່າງປະເທດຂອງນັກລົງທຶນພາຍໃນແມ່ນທ່າອ່ຽງທີ່ປັດສະຈາກບໍ່ໄດ້ຂອງບັນດາປະເທດຕ່າງໆຢູ່ໃນໂລກ, ໃນນັ້ນ ບໍ່ພຽງແຕ່ບັນດາປະເທດທີ່ມີພື້ນຖານທາງດ້ານເສດຖະກິດທີ່ພັດທະນາແລ້ວ, ຊຶ່ງນັບທັງບັນດາປະເທດທີ່ກຳລັງພັດທະນາ ແລະ ດ້ອຍພັດທະນາກໍຍິ່ງມີຄວາມຈຳເປັນຢ່າງສູງ ເພາະຈະປະກອບສ່ວນຄວາມດຸ່ນດ່ຽງ ໃນການພັດທະນາການແລກປ່ຽນທາງດ້ານເຕັກນິກ, ການຄ້າຂາຍ, ວິຊາການ ແລະ ອື່ນໆ ລະຫວ່າງນັກລົງທຶນດ້ວຍກັນ.

ດັ່ງນັ້ນ, ຈຶ່ງສາມາດ ເວົ້າໄດ້ວ່າ: ການອອກໄປລົງທຶນຢູ່ຕ່າງປະເທດແມ່ນຜູ້ລົງທຶນເຄື່ອນຍ້າຍທຶນ ຫຼື ການຊຳລະຊື້ໜຶ່ງສ່ວນ ຫຼື ທັງໝົດວິສາຫະກິດ ຫຼື ກຳນົດສິດກຳມະສິດເພື່ອປະຕິບັດການເຄື່ອນໄຫວລົງທຶນຢູ່ນອກດິນແດນຂອງ ສປປ ລາວ; ພ້ອມດຽວກັນນັ້ນກໍເຂົ້າຮ່ວມໃນການຄຸ້ມຄອງການເຄື່ອນໄຫວລົງທຶນດັ່ງກ່າວນັ້ນໂດຍກົງ ທ່າອ່ຽງຂອງພາກພື້ນກໍຄືຂອງໂລກໃນປັດຈຸບັນນີ້, ລັດຖະບານເຮົາໄດ້ສົ່ງເສີມບັນດາຜູ້ລົງທຶນອອກໄປລົງທຶນຢູ່ຕ່າງ ປະເທດເພື່ອຂຸດຄົ້ນ, ພັດທະນາ, ເປີດກວ້າງຕະຫຼາດ; ເພີ່ມທະວີຄວາມອາດສາມາດໃນການນຳອອກສິນຄ້າ, ການບໍລິການ, ມີລາຍຮັບທີ່

ເປັນເງິນຕາຕ່າງປະເທດ; ເຂົ້າເຖິງເຕັກໂນໂລຊີທີ່ທັນສະໄໝ, ຍົກສູງຄວາມສາມາດໃນການຄຸ້ມ ຄອງ ແລະ ເພີ່ມທະວີແຫຼ່ງຄວາມສາມາດໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດເຮົາ.

**2.2. ເງື່ອນໄຂ, ສິດ-ພັນທະ,ຄວາມສ່ຽງ ແລະ ສິ່ງທ້າທາຍຂອງຜູ້ອອກໄປລົງທຶນຢູ່ຕ່າງປະເທດ**

**+ ເງື່ອນໄຂ**:

ຜູ້ອອກໄປລົງທຶນຢູ່ຕ່າງປະເທດຕ້ອງໄດ້ປະຕິບັດບັນດາເງື່ອນໄຂຕົ້ນຕໍດັ່ງນີ້:

- ການເຄື່ອນໄຫວອອກໄປລົງທຶນຢູ່ຕ່າງປະເທດສອດຄ່ອງກັບຫຼັກການການອອກໄປລົງທຶນຢູ່ຕ່າງປະເທດ;
- ການເຄື່ອນໄຫວອອກໄປລົງທຶນຢູ່ຕ່າງປະເທດບໍ່ນອນໃນຂະແໜງ, ຂົງເຂດທີ່ຫ້າມລົງທຶນ;
- ຜູ້ລົງທຶນ ຫຼື ນັກລົງທຶນມີສັນຍາດ້ານເງິນຕາຕ່າງປະເທດດ້ວຍຕົນເອງ ຫຼື ໄດ້ເຮັດສັນຍາກັບອົງການຈັດ ຕັ້ງສິນເຊື່ອດ້ານເງິນຕາຕ່າງປະເທດເພື່ອປະຕິບັດການເຄື່ອນໄຫວອອກໄປລົງທຶນຢູ່ຕ່າງປະເທດ;
- ຕ້ອງໄດ້ມີການປະສານສົມທົບກັບອົງການທີ່ມີສິດອຳນາດກ່ຽວຂ້ອງເປັນຕົ້ນແມ່ນ ກະຊວງແຜນການ ແລະ ການລົງທຶນ, ກະຊວງອຸດສາຫະກຳ ແລະ ການຄ້າ, ທະນາຄານແຫ່ງ ສປປ ລາວ..;
- ມີຂໍ້ຕົກລົງການອອກໄປລົງທຶນຢູ່ຕ່າງປະເທດ;
- ມີເອກະສານຂອງອົງການອາກອນຢັ້ງຢືນການປະຕິບັດພັນທະເສຍອາກອນຂອງຜູ້ລົງທຶນ ຫຼື ນັກລົງທຶນ.

ນັກລົງທຶນພາຍໃນປະເທດ ທີ່ມີຈຸດປະສົງອອກໄປລົງທຶນຢູ່ຕ່າງປະເທດ ຕ້ອງໄດ້ປະຕິບັດຕາມເງື່ອນໄຂເບື້ອງ ຕົ້ນພາຍໃນປະເທດຂອງຕົນພາຍໃຕ້ຂໍ້ກຳນົດກົດໝາຍພາຍໃນກ່ອນອອກໄປລົງທຶນຢູ່ຕ່າງປະເທດ ເປັນຕົ້ນຕ້ອງປະຕິ ບັດຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ, ຕ້ອງສະແດງເຈດຈຳນົງຢ່າງຈະແຈ້ງວ່າ ມີເປົ້າໝາຍໂຄງການການລົງທຶນຢູ່ຕ່າງປະເທດ, ຕ້ອງມີໃບຢັ້ງຢືນການກວດ ສອບບັນຊີການເງິນຄືນຫຼັງສອງປີຫຼ້າສຸດຈາກຂະແໜງການເງິນ ຫຼື ບໍລິສັດກວດສອບເອກະລາດ, ຜູ້ລົງທຶນຕ້ອງໄດ້ປະຕິບັດພັນທະທາງດ້ານການເງິນຢ່າງຄົບຖ້ວນ ແລະ ຖືກຕ້ອງກົດໝາຍຕໍ່ລັດຖະບານ ສປປ ລາວ, ເມື່ອຄົບເງື່ອນໄຂທີ່ກ່າວມານີ້ນັກລົງທຶນພາຍໃນປະເທດສາມາດຍື່ນຄຳຮ້ອງອອກໄປລົງທຶນຢູ່ຕ່າງປະເທດຕາມລະບຽບການ.

**+ ສິດ ແລະ ພັນທະ:**

ຜູ້ອອກໄປລົງທຶນຢູ່ຕ່າງປະເທດກໍບໍ່ຕ່າງຫຍັງຈາກນັກລົງທຶນທົ່ວໄປ ຊຶ່ງມີສິດ ແລະ ພັນທະໃນການເຄື່ອນ ໄຫວທຸລະກິດຕາມລະບຽບກົດໝາຍ, ເປັນຕົ້ນວ່າມີສິດໃນການຈ້າງແຮງງານລາວ ເພື່ອເຮັດວຽກຢູ່ວິສາຫະກິດຂອງ ຕົນຢູ່ຕ່າງປະເທດ ຊຶ່ງບໍ່ຂັດກັບກົດໝາຍຂອງ ສປປ ລາວ ແລະ ປະເທດທີ່ອອກໄປລົງທຶນ, ມີສິດໃນການນຳເງິນ ແລະ ຊັບສິນອອກໄປລົງທຶນຢູ່ຕ່າງປະເທດ ແລະ ກັບຄືນປະເທດພາຍຫຼັງປະຕິບັດພັນທະຢ່າງຄົບຖ້ວນຕໍ່ກັບປະເທດ ທີ່ຜູ້ລົງທຶນອອກໄປລົງທຶນ, ໝາກຜົນ ຫຼື ຜົນກຳໄລທີ່ໄດ້ຮັບຜູ້ລົງທຶນກໍສາມາດນຳກັບຄືນປະເທດ, ມີສິດໃນການໄດ້ ຮັບນະໂຍບາຍ ຫຼື ຖືກປົກປ້ອງຕາມກົດໝາຍ ຂອງ ສປປ ລາວ.

ຜູ້ອອກໄປລົງທຶນຕ່າງປະເທດ ນອກຈາກໄດ້ຮັບສິດຕ່າງໆທີ່ກ່າວມານັ້ນແລ້ວ ຍັງຕ້ອງໄດ້ປະຕິບັດພັນທະຂອງຕົນຕາມກົດໝາຍ ແລະ ລະບຽບການຂອງປະເທດທີ່ໄປລົງທຶນ, ຕ້ອງປະຕິບັດລະບົບການລາຍງານດ້ານການເງິນ ແລະ ການດຳເນີນທຸລະກິດຂອງຕົນຕໍ່ຫ້ອງການບໍລິຫານການລົງທຶນປະຕູດຽວ ເພື່ອແຈ້ງໃຫ້ກະຊວງການເງິນ ແລະ ທະນາຄານ ແຫ່ງ ສປປ ລາວ, ໃນສະພາບຕົວຈິງການປະຕິບັດພັນທະສ່ວນໃຫຍ່ກໍແມ່ນການປະຕິບັດພັນທະຕໍ່ປະ ເທດທີ່ອອກໄປລົງທຶນ, ບໍ່ວ່າຈະເປັນພັນທະດ້ານການເງິນ, ດ້ານກົດໝາຍ ແລະ ອື່ນໆ.

**+ ບັນດາຄວາມສ່ຽງ, ສິ່ງທ້າທາຍ:**

ຄຽງຄູ່ບັນດາການປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາເສດຖະກິດ-ສັງຄົມໃຫ້ ສປປ ລາວ, ໃຫ້ບັນດາປະເທດຕ່າງໆທີ່ຮັບການລົງທຶນ, ການອອກໄປລົງທຶນຢູ່ຕ່າງປະເທດຂອງບັນດາ ວິສາຫະກິດຂອງລາວກໍຍັງມີຄວາມສ່ຽງ, ສິ່ງທ້າທາຍ, ດັ່ງນີ້:

1) ບັນດາຄວາມແຕກຕ່າງດ້ານວັດທະນະທຳ, ກົດໝາຍ, ສະພາບແວດລ້ອມລະຫວ່າງ ສປປ ລາວ ແລະ ບັນດາປະເທດທີ່ຮັບການລົງທຶນດັ່ງກ່າວນີ້ ໄດ້ສົ່ງຜົນສະທ້ອນເຖິງບັນດາຂໍ້ຂັດແຍ່ງທີ່ບໍ່ເພິ່ງປາດຖະໜາ, ສົ່ງຜົນສະທ້ອນ ເຖິງການປະຕິບັດການລົງທຶນ, ສິດ ແລະ ຜົນປະໂຫຍດຂອງປະຊາຊົນທ້ອງຖິ່ນກໍຄືພາບພົດຂອງຜູ້ລົງທຶນຂອງ ລາວ ໃນພາກພື້ນ ແລະ ສາກົນ ໃນສະພາບການຕົວຈິງໄດ້ສະທ້ອນໃຫ້ເຫັນວ່າ ວິສາຫະກິດຂອງລາວໃນເວລາອອກໄປລົງທຶນຢູ່ຕ່າງປະເທດມັກຈະຖືເອົາຄວາມສຳນຶກຂອງຄົນລາວ, ແບບວິທີຂອງລາວ ເປັນຕົ້ນແມ່ນດ້ານທີ່ດິນ, ຖ້າວິສາຫະກິດລົງທຶນຢູ່ ສປປ ລາວ ລັດຖະບານໃຫ້ສຳປະທານທີ່ດິນໃນໄລຍະເວລາບໍ່ເກີນ 50 ປີ, ແຕ່ລົງທຶນຢູ່ ສປປ ຈີນ ລະບອບກຳມະສິດທີ່ດິນຈະຕ່າງ, ສົ່ງຜົນສະທ້ອນໃຫ້ຜູ້ລົງທຶນຕ່າງປະເທດພົບຄວາມຫຍຸ້ງຍາກບໍ່ໜ້ອຍ.

2) ຫຼາຍວິສາຫະກິດຂອງລາວ ທີ່ອອກໄປລົງທຶນຕ່າງປະເທດ ນອກຈາກດຳເນີນທຸລະກິດແລ້ວ, ແຕ່ການ ເຄື່ອນໄຫວຍັງເຮັດດ້ວຍຕົນເອງ, ຍ້ອນແນວນັ້ນແມ່ນງ່າຍທີ່ຈະເກີດມີຂໍ້ຂັດແຍ່ງ ໃນເວລານັ້ນ, ການແກ້ໄຂຂໍ້ຂັດ ແຍ່ງແມ່ນມີຄວາມຫຍຸ້ງຍາກສັບສົນທີ່ສຸດ, ສົ່ງຜົນສະທ້ອນເຖິງປະສິດທິພາບໃນການດຳເນີນທຸລະກິດ. ດ້ານການຄຸ້ມ ຄອງລັດ, ປັດຈຸບັນຍັງບໍ່ມີອົງການທີ່ຄົບຖ້ວນດ້ານສິດອຳນາດ, ເງື່ອນໄຂ ແລະ ຄວາມອາດສາມາດຢ່າງຈະແຈ້ງ ໃນການຜັນຂະຫຍາຍການຄຸ້ມຄອງ, ຕິດຕາມ, ເກັບກຳສະພາບການເຄື່ອນໄຫວລົງທຶນ, ດຳເນີນທຸລະກິດຂອງບັນດາ ວິສາຫະກິດຂອງລາວທີ່ກຳລັງອອກໄປລົງທຶນຢູ່ຕ່າງປະເທດ.

3) ປະຊາຊົນບາງເຂດຍັງຈຳກັດດ້ານລະດັບການສຶກສາ, ມີຄວາມຫຍຸ້ງຍາກໃນການເຂົ້າເຖິງນິຕິກຳ. ສະນັ້ນ, ປ່ຽນແທນການຄຸ້ມຄອງດ້ວຍນິຕິກຳ, ວິສາຫະກິດລ້ວນແຕ່ປະຕິບັດດ້ວຍຮູບການ ຮູບພາບບັນດາໂຄງການໃນການ ຮັບສະໝັກ, ກໍ່ສ້າງ, ລະບອບການຄໍ້າປະກັນ....ເພື່ອໃຫ້ປະຊາຊົນເຂົ້າໃຈງ່າຍ, ຈື່ງ່າຍ ເຖິງຢ່າງໃດກໍຕາມ, ສິ່ງດັ່ງ ກ່າວນີ້ໄດ້ເຮັດໃຫ້ວິສາຫະກິດເສຍເວລາ ແລະ ຄ່າໃຊ້ຈ່າຍຕື່ມ.

4) ຄວາມອາດສາມາດທາງດ້ານການເງິນກໍແມ່ນບັນຫາທີ່ກີດຂວາງໂອກາດໃນການອອກໄປລົງທຶນຢູ່ຕ່າງປະເທດຂອງຫຼາຍວິສາຫະກິດ. ເປັນຕົ້ນແມ່ນ: ໃນຂົງເຂດກະສິກຳ, ວິສາຫະກິດຕ້ອງໄດ້ກະກຽມຕື່ມຄວາມອາດສາມາດດ້ານ ການເງິນ, ມີຄືແນວນັ້ນຈຶ່ງຈະສາມາດຮັບປະກັນຄວາມອາດສາມາດຮັກສາໄດ້ບັນດາການເຄື່ອນໄຫວຂອງຕົນ.

**References:**


1. ກົດໝາຍຍວ່າດ້ວຍການສົ່ງເສີມການລົງທຶນປີ 2016;
2. ກົດໝາຍວ່າດ້ວຍວິສາຫະກິດ, ສະບັບເລກທີ 46/ສພຊ,ລົງວັນທີ 26 ທັນວາ 2013;
3. ກົດໝາຍວ່າດ້ວຍການແຂ່ງຂັນທາງທຸລະກິດ, ສະບັບເລກທີ 60/ສພຊ, ລົງວັນທີ14 ກໍລະກົດ 2015;

4. ຂໍ້ຕົກລົງຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ, ສະບັບເລກທີ 002/ຄລທ.ສ, ລົງວັນທີ 20 ສິງຫາ 2018 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການບໍລິການ ການລົງທຶນປະຕູດຽວ ແລະ ໜ່ວຍງານປະສານງານການບໍລິການການລົງທຶນປະຕູດຽວຂັ້ນສູນກາງ;
5. ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ, ສະບັບເລກທີ 05/ນຍ,ລົງວັນທີ 05 ມັງກອນ 2018;
6. ດຳລັດວ່າດ້ວຍການນຳເຂົ້າ ແລະ ການສົ່ງອອກສິນຄ້າ,ສະບັບເງກທີ 114/ລບ, ລົງວັນທີ 6 ເມສາ 2011;
7. ລະບຽບວ່າດ້ວຍການຄຸ້ມຄອງ ແລະນະໂຍບາຍສົ່ງເສີມການລົງທຶນໃນເຂດເສດຖະກິດພິເສດສະຫວັນ-ເຊໂນ, ສະບັບເລກທີ 177/ນຍ, ລົງວັນທີ 13 ພະຈິກ 2003;
8. ຕຳລາຮຽນກົດໝາຍສົ່ງເສີມການລົງທຶນ, ສະຖາບັນຍຸຕິທຳແຫ່ງຊາດປີ 2021.